# ທັມມະນູນ

ພັນທະມິດເພື່ອປະຊາທິປະໄຕໃນລາວ
Hohenlimburger Str.120
58093Hagen,Germany
TelFax:0049-2334-4444-668
E-mail: alliance-lao@alice.de

# ທັມມະນູນຂອງອົງການພັນທະມິດເພື່ອປະຊາທິປະໄຕໃນລາວ

## ມາດຕຣາ 01 ວ່າດ້ວຍຊື່, ສຳນັກງານ ແລະ ກາຫມາຍ

ກ.ວ່າດ້ວຍຊື່:

ການຈັດຕັ້ງນີ້ມີຊື່ເປັນພາສາລາວວ່າ: ພັນທະມິດເພື່ອປະຊາທິປະໄຕໃນລາວ, ຊຽນຫຍໍ້ວ່າ:ພປລ
ພາສາອັງກິດວ່າ: Alliance for Democarcy in laos (ADL)
ພາສາເຢັຽຣະມັນວ່າ: Allianz für Demokratie in laos (ADL)
ພາສາຝຣັ່ງເສດວ່າ: Alliance pour Démocratie au laos (ADL)

ຂ.ສຳນັກງານຂອງອົງການ :

ສຸນກາງໃຫຍ່ຂອງອົງການນີ້ ຈະຕັ້ງຢູ່ປະເທດໃດນຶ່ງ ອີງຕາມຄວາມສະດວກ ໃນການປະຕິບັດງານ ໂດຍແມ່ນການຕົກລົງໃນກອງປະຊຸມຫລວງຂອງອົງການດັ່ງກ່າວ.ອີງຕາມກອງປະຊຸມລວງ ພປລ ທີ່ເມືອງ ຊີດເນ ປະເທດອອສເຕຣເລັຽ ຄັ້ງວັນທີ17 ກັນຍາ ປີ 2011 ໄດ້ຕົກລົງເອົາ ສູນກາງ ຢູ່ເມືອງຮາເກີນ ປະເທດ ເຢັຽຣະມັນ ຄືເກົ່າ

Hohenlimburger St .120,58093 Hagen,Germany
Tel&Fax:0049-2334-4444 668
E-mail:alliance-lao@alice.de

ຄ.ວ່າດ້ວຍອາຍຸການ :

ຄະນະນຳພາແຕ່ລະຊຸດ ແມ່ນມາຈາກການເລືອກຕັ້ງ ໃນກອງປະຊຸມຫລວງຂອງ ພປລ ມີ ອາຍຸການ 4 ປີ, ຈາກນັ້ນຕ້ອງ ມີການເລືອກຕັ້ງໃຫມ່ຈາກກອງ ປະຊຸມຫລວງ.ຄະນະນຳພາຊຸດເກົ່າມີໜ້າທີສືບຕໍ່ປະຕິບັດງານຕໍ່ໄປ ຈົນກວ່າຈະມີການເລືອກຕັ້ງຄະນະໃຫມ່.

ງ.ວ່າດ້ວຍກາຫມາຍ :

ກາວົງມົນ ທີມີຊ້າງສາມຫົວຢູ່ເບື້ອງເທິງ ແລະ ແຜນທີ່ໂລກຢູ່ເບື້ອງລຸ່ມ,ມີຂອບຂຽນຊື່ພັນທະມິດ ພາສາອັງກິດຢູ່ຂ້າງເທິງ ແລະ ພາສາລາວຢູ່ຂ້າງລຸ່ມ, ທັງຫມົດມີຄວາມຫມາຍໃນການເປັນສຳພັນທະມິດ ເພື່ອເຄື່ອນໄຫວອົງກງານ ຮ່ວມກັນໃນທົ່ວໂລກເພື່ອປະຊາທິປະໄຕໃນລາວ, ການີ້ໃຊ້ສຳລັບການເຄື່ອນ ໄຫວ ໃນໄລຍະການຕໍ່ສູ້ ແລະ ບໍ່ແມ່ນທຸງຊາດ.ສຳລັບທູງຊາດລາວທີຈະໃຊ້ໃນອານາຄົດ,ຈະເປັນຮູບໃດ ແມ່ນໜ້າ ທີຂອງສະພາແຫ່ງຊາດທີມາຈາກການເລືອກຕັ້ງເສລີ ເປັນຜູ້ຕົກລົງອອກແບບໃຊ້.

## ມາດຕຣາ 02 ວ່າດ້ວຍຈຸດປະສົງ :

ກ. ເປັນການຈັດຕັ້ງເພື່ອຜົນປະໂຍດລວມ :

1. ເປັນການຈັດຕັ້ງທີ ບໍ່ມີຈຸດປະສົງເພື່ອຫາລາຍໄດ້ ສຳລັບຕົນເອງ.

ກ2. ສົມບັດວັດຖຸຂອງການຈັ່ດຕັ້ງ ພປລ ມີສິດໃຊ້ເພື່ອຈຸດປະສົງຂອງການຈັດຕັ້ງນີ້ເທົ່ານັ້ນ.ສະມາຊິກຂອງ ພປລ ບໍມີສິດໃຊ້ ສົມບັດວັດຖຸຂອງການຈັດຕັ້ງເປັນຂອງສ່ວນຕົວ.

ກ3. ຫ້າມບໍ່ໃຫ້ມີການມອບລາຍໄດ້ພິເສດແກ່ບຸກຄົນໃດ ຈະແມ່ນຜູ້ສັງກັດຫຼືບໍ່ສັງກັດໃນການຈັດຕັ້ງ ພປລ ກໍຕາມ.

ຂ. ເປັນການຈັດຕັ້ງທີ່ຮ່ວມມື ແລະ ປະສານງານກັບ ລວ່າງບັນດາການຈັດຕັ້ງຝ່າຍຄ້ານຂອງລາວທົ່ວໂລກ ໂດຍ ບໍ່ຈຳເປັນຍຸບເລີກການຈັດຕັ້ງເດີມຂອງໃຜລາວທີ່ມີມາແລ້ວ, ເປັນຮ່ວມມື ແລະ ປະສານງານ ຂອງ ຜູ້ຕາງໜ້າຂອງລາວຢູ່ນອກປະເທດ ແລະ ໃນປະເທດທີ່ເຫັນພ້ອມ ນຳແນວທາງ ພປລ ທີ່ມີນ້ຳໃຈ ຮັກຊາດ, ມີຈຸດປະສົງຢາກໃຫ້ປະເທດລາວມີເອກຣາຊ ແລະ ມີການປ່ຽນແປງການປົກຄອງແບບສັນຕິວິທີ ໄປສູ່ປະຊາ ທິປະໄຕ ໂດຍໃຫ້ປ່ຽນແປງທັມມະນຸນແຫ່ງຊາດໄປສູ່ປະຊາທິປະໄຕອັນແທ້ຈິງ.

ຄ. ເປັນປາກສຽງຕາງໜ້າຂອງອົງການຈັດຕັ້ງລາວ ຮ່ວມກັບສາກົນ ຊຸກຍູ້ຫນີບຮັດໃຫ້ຜູ້ນຳພັກ ແລະ ຣັຖະບານ ສປປລາວ_ປ່ຽນແປງລະບົບການປົກຄອງໄປສູ່ປະຊາທິປະໄຕ,ປ່ອຍໃຫ້ມີການເລືອກ ຕັ້ງຕາມຫຼັກ ປະຊາທິປະໄຕແບບເສຣີ ມີຄວາມເປັນທັມ_ທີ່ມີຫລາຍພັກການເມືອງເຂົ້າແຂ່ງຂັນເລືອກຕັ້ງ ໂດຍມີການ ກວດກາດູແລ ຂອງສະຫະປະຊາຊາດ.

ງ. ສະແວງຫາການສະໜັບສະໜຸນອຸ້ມຊູຈາກນາງຊາດໂດຍບໍ່ມີຂໍ້ຜູກມັດໃດໆ ທີ່ຢາກໃຫ້ປະເທດລາວ ມີການປົກຄອງແບບປະຊາທິປະໄຕອັນແທ້ຈິງ.

ຈ. ເພື່ອໃຫ້ປະຊາຊົນລາວທົ່ວປະເທດ ມີສິດລົງປະຊາມັດຕິ ເລືອກເອົາລະບົບການປົກຄອງແບບປະຊາ ທິປະໄຕ ທີ່ມີປະທານທີ່ບໍ່ດີ ຫລື ມີກະສັດເປັນປະມຸກແຫ່ງຊາດ.

ສ. ເພື່ອຮັກສາວັດທະນາທັມ, ມູນມໍລະດົກອັນດີງາມຂອງຊາດລາວ,ເພື່ອປົກປ້ອງ ທຳມະຊາດສິ່ງແວດລ້ອມໃນປະເທດລາວ,_ເພື່ອປົກປ້ອງຮັກສາຄວາມເປັນເອກຣາຊ ເຂດນ້ຳແດນດິນຂອງລາວໃຫ້ຍືນຍົງຄົງຕົວ ໂດຍປະລະຈາກການສວຍໃຊ້ ຫລື_ອິດທິພົນຂົ່ມຂູ່ຈາກພະເດັດການຕ່າງຊາດ.

ຊ. ເພື່ອຢຸດຕິການສໍ້ລາດບັງຫລວງໃນປະເທດລາວ ທີ່ນຳຄວາມເສື່ອມເສັຍ ສັບສິນຂອງຊາດ ທີ່ບັນພະບູລຸດສ້າງໄວ້, ເພື່ອຢຸດຕິບໍ່ໃຫ້ຊາວໜຸ່ມລາວ ໄປເປັນທາດໃນປະເທດອື່ນ ຫຼື ໃພສັງຄົມໃນປະເທດຕົນ, ເພື່ອສົ່ງເສີມຕາແໜ່ງການສຶກສາໃຫ້ທົ່ວເຖິງ,ໃຫ້ຊາວໜຸ່ມລາວມີການສຶກສາ,ມີວຽກເຮັດງານການທຳຢ່າງເໝາະສົມ,ເພື່ອສົ່ງເສີມສາທາລານາສຸກໃຫ້ມີເຄື່ອງມືທັນສະໄໝ ແລະ ໃຫ້ມີຢາປິ່ນປົວພະຍາດຢ່າງພຽງພໍ.

ຍ. ເພື່ອຄົ້ນຄ້ວເກັບກຳສະຖິຕິ ແລະ ຂໍ້ມູນກ່ຽວກັບສັບພະຍາກອນສ່ວນບຸກຄົນ ຂອງມະຫາຊົນລາວທົ່ວໂລກ ໂດຍສະເພາະການຮຽບຮຽງ ນັກວິຊາການຂແນງຕ່າງໆ, ນັກຄົ້ນຄວ້າ,ນັກສຽວຊານ ແລະ ປັນຍາຊົນເຊື້ອຊາດລາວຢູ່ນອກປະເທດ ເພື່ອເປັນການ ກະກຽມ ທີ່ຈະໄປຊ່ວຍເຫລືອ,ອົບຮົມ ແລະ ສິດສອນສິດສອນປະຊາຊົນລາວຢູ່ໃນປະເທດ ໃນການພັດທະນາສ້າງປະເທດລາວ ພາຍໃຕ້ການປົກຄອງ ແບບເສຣີປະຊາ ທິປະໄຕ ເພື່ອໃຫ້ການເປັນຢູ່ຂອງປະຊາຊົນລາວທົ່ວປະເທດ ຜ່ານພົ້ນຈາກຄວາມທຸກຈົນ ໄປສູ່ລະດັບທີ່ເທົ່າທຽມທັນຊາວໂລກ.

ດ. ເພື່ອໃຫ້ລາວໃນ ແລະ ລາວນອກປະເທດມີສິດສເມີພາບ ໂດຍສະເພາະລາວນອກໃນການໄປຍາມຫລືໄປຢູ່ລາວຢ່າງບໍ່ຈຳແນກແຍກສີດ.

ຕ. ເພື່ອໃຫ້ອຳນາດການປົກຄອງ ສປປລາວ ປ່ອຍນັກໂທດການເມືອງ ຫລືປ່ອຍປະຊຊົນລາວຜູ້ທີ່ຕໍ່ສູ້ຮຽກຮ້ອງເອົາສິດປະຊາທິປະໄຕທີ່ຖືກຄຸມຂັງຫລືຖືກກ່າວຫາໃຫ້ມີອິດສະລະພາບ ຢ່າງສິ້ນເຊີງ ແລະ ບໍ່ມີເງື່ອນໄຂ.

ຖ. ເພື່ອໃຫ້ອຳນາດການປົກຄອງລາວຍອມປະຕິບັດການນັບຖືສິດທິມະນຸສ ຕາມກົດບັນຍັດຂອງ ສະຫະປະຊາຊາດ ທີ່ບົ່ງໄວ້ ຊຶ່ງລາວເອງເປັນສາມະຊິກ ເປັນຕົ້ນແມ່ນ: ສິດທິໃນການຊຸມນຸມຊົນ, ສິດທິຕັ້ງພັກການເມືອງ,ສິດທິໃນການເກັບກຳ ແລະ ນຳສະເໜີຂ່າວສານ,ສິດທິໃນການອອກຄຳເຫັນ,ສິດທິໃນການຂີດຂຽນ,ສິດທິໃນການເຄື່ອນໄຫວໄປມາ,ສິດທິໃນການນັບຖືສາສະນາ ແລະ ສິດທິອື່ນໆ.

ທ. ເພື່ອການທ້ອນໂຮມລາວທຸກຊົນຊາດຊົນເຜົ່າ ແລະ ເພື່ອຄວາມຢູ່ດີມີສຸກຂອງຊາວລາວທັງຊາດ,ເພື່ອພັດທະນາປະເທດລາວໃຫ້ມີຄວາມຈະເລີນກ້າວໜ້າໃຫ້ທັນຕາມການ ແລະ ຍຸກສະໄໝ.

## ມາດຕຣາ 03 ວ່າດ້ວຍໂຄງຮ່າງການຈັດຕັ້ງ :

### ກ.ຄະນະປະທານ ພປລ:

ແມ່ນຜູ້ນຳຂັ້ນສູງສຸດຂອງ ພປລ ຫລາຍສຸດເຈັດທ່ານ ຫນ້ອຍສຸດສາມທ່ານ ປະກອບມີຜູ້ຕ່າງໜ້າຂອງລາວຈາກ ທະວີບ ຫລື ປະເທດຕ່າງໆ ຕາມການເລືອກຕັ້ງຕົກລົງໃນກອງປະຊຸມ ຫລວງ,ອີງຕາມ ກອງປະຊຸມຫລວງຂອງ ພປລ ທີ່ ຊິດເນ ປະເທດ ອອສເຕຣເລັຍ ໃນວັນທີ່17 ກັນຍາ 2011 ມີຫ້າທ່ານ.

ຄະນະປະທານທຸກຄົນມີສິດສະເມີພາບກັນ ໃນການນຳພາ ແລະ ຕັດສີນບັນຫາ ຕາມສຽງສ່ວນຫລາຍຂອງຄະນະດັ່ງກ່າວ,ຄະນະປະທານດັ່ງກ່າວເລືອກເອົາຜູ້ນຶ່ງເປັນປະທານ ແລະ ຜູ້ນຶ່ງເປັນເລຂາທິການ,ສອງທ່ານນີ້ເປັນຜູ້ປະສານງານໃນຄະນະປະທານ, ໃນກໍລະນີມີສຽງສເມີກັນແມ່ນປະທານເປັນຜູ້ຕັດສີນ.ປະທານ ແລະ ຮອງປະທານນຶ່ງທ່ານໂດຍແມ່ນຄະນະປະທານຕົກລົງເລືອກເອົາ, ເປັນຜູ້ເອົາຄວາມຮັບຜິຊອບ ຂອງການຈັດຕັ້ງ ພປລ ຕໍ່ຫນ້າກົດຫມາຍປະເທດທີ່ ພປລ ລົງທະບຽນ ໃນປະເທດເຢັຽລະມັນParagraf 26 BGB.

- ຜູ້ທີ່ເປັນຄະນະປະທານດັ່ງກ່າວຕ້ອງແມ່ນຄົນລາວທີ່ມີເຊື້ອສາຍລາວ,ເປັນຜູ້ມີຄຸນສົມບັດເປນຜູ້ນຳທີ່ດີທີ່ຕັດສີນບັນຫາດ້ວຍເຫດຜົນ ແລ ະເປັນທຳຕາມຫລັກປະຊາທິປະໄຕນັບຖືສຽງສ່ວນຫລາຍ ປະສະຈາກການສວຍໃຊ້ອຶດທິພົນ ເພື່ອຜົນປະໂຫຍດສ່ວນຕົວ ຫລື ພັກຝ່າຍຕົນເອງ,ເປັນຜູ້ມີຄວາມສະດວກ ໃນການເຄື່ອນໄຫວໄປມາໃນວຽກງານຂອງການຈັດຕັ້ງ,ເປັນຜູ້ທີ່ມີຄວາມສາມາດໃນການຕິດຕໍ່ສາກົນ.
- ເອກກະສານ ທຸກສະບັບມີແຕ່ປະທານ ຫລືຮອງປະທານເທົ່ານັ້ນທີມີສິດເຊັນ ຕາມການຕົກລົງຂອງຄະນະປະທານ.
- ເລຂາທິການມີຫນ້າທີເປັນໂຄສົກຂອງຄະນະປະທານ,ເປັນຜູ້ແຈ້ງການເຄື່ອນໄຫວຂອງຄະນະປະທານ ແລະ ຂອງກັມມາທິການຕ່າງໆ ຫລື ແຈ້ງການເຄື່ອນໄຫວຂອງ ພປລ ໃຫ້ມະຫາຊົນຊາບ ຕາມເງື່ອນໄຂເຫມາະສົມ.
- ຄະນະປະທານຕ້ອງປະຊຸມກັນເດືອນລະເທື່ອ,ຈະໃຊ້ທາງຈົດຫມາຍຫລືທາງໂທລະສັບກໍ່ໄດ້ ສຸດແລ້ວແຕ່ຄວາມສະດວກ ແລະ ມີສິດຮຽກປະຊຸມດ່ວນໃນກໍລະນີທີ່ມີເຫດການອັນຈຳເປັນ.

### ຂ.ໂຄງຮ່າງການຈັດຕັ້ງປະຈຳປະເທດ ຫລື ທະວີບ :

ຄະນະປະທານ ພປລ ແຕ່ລະທ່ານຂ້າງເທິງ ແມ່ນ ປະທານປະຈຳປະເທດ ຫລື ທະວີບຕ່າງໆ ຕາມການເລືອກຕັ້ງ ຕົກລົງ ໃນກອງປະຊຸມຫລວງ.ແຕ່ລະທະວີບ ຫລື ປະເທດ ຕ້ອງມີ ຄະນະກຳມະການ ຢ່າງນ້ອຍດັ່ງຕໍ່ລົງໄປນີ້ :

1. ປະທານ ນຶ່ງທ່ານ.
2. ເລຂານຸການ ນຶ່ງທ່ານ.
3. ນາຍຄັງ ນຶ່ງທ່ານ.

ຄະນະປະທານ ແຕ່ລະທ່ານມີສິດແຕ່ງຕັ້ງ ຄະນະປະຈຳຂອງຕົນ ຫລື ກັມມາທິການ ຂື້ນໄດ້ຕາມ ເງື່ອນໄຂອັນເຫມາະສົມ ໂດຍປາສະຈາກການນຳພາແບບຜະເດັດການ.

ເລຂາ ມີຫນ້າທີປະຕິ ບັດງານຕາມການຕົກລົງຂອງ ຄະນະປະທານ, ມີຫນ້າທີໃນການ ຕິດຕໍ່, ຂີດຂຽນ, ບັນທຶກ,ພິມສິ່ງເອກກະສານຕ່າງໆ, ມີສິດປະຕິບັດຫນ້າທີແທນ ຄະນະປະທານ ແລະລົງລາຍເຊັນຕາງ ຄະນະປະທານໄດ້ໃນກໍລະນີຄະນະປະທານຕິດຂັດ..

ນາຍຄັງ ປະຈຳປະເທດ ຫລື ທະວີບ ເປັນຜູ້ເກັບກຳລາຍຮັບລາຍຈ່າຍຂອງ ພປລ ປະຈຳທ້ອງ ຖິ່ນ,ເກັບກຳຄ່າທຳນຽມ ສະມາຊິກ ປະຈຳປີແລະເປັນຜູ້ໃຫ້ຄຳຕອບການຮັບເງີນເປັນທາງການແລ້ວແຈ້ງໃຫ້ ນາຍຄັງສູນກາງ ພປລ ທີ່ເປັນ ກັມມະທິການ ຝ່າຍເສດຖະກິດ ໃຫ້ຊາບທຸກໆຫົກເດືອນ.

### ຄ. ກັມມາທິການ

ແຕ່ລະກັມມາທິການ ປະກອບດ້ວຍຄົນລາວ ຫລື ຊາວສາກົນ,ນັກການເມືອງ, ນັກວິຊາການ, ທີ່ມີຄວາມສາມາດ ແລະ ເຫມາະສົມ ໃນການປະຕິບັດງານແຕ່ລະດ້ານ,ແຕ່ລະກັມມາທິການ ມີ ຫົວຫນ້ານຶ່ງທ່ານ,ຮອງນຶ່ງທ່ານ ແລະ ຄະນະອານຸກັມມາທິການ ໂດຍບໍ່ຈຳກັດຈຳນວນ. ພປລ ແຕ່ລະທະວີບ ຫລື ປະເທດມີສິດເປັນ ເປັນຫົວຫນ້າກັມມາທິການຂແນງຕ່າງໆ ທີ່ຕັ້ງຂື້ນ.

ກັມມາທິການຈະຕັ້ງຂື້ນຫລາຍນ້ອຍ ແມ່ນ ອີງຕາມວຽກງານຕົວຈິງ ທີ່ ຮຽກຮ້ອງຕ້ອງການ ແລະ ຕາມການຕົກລົງຈາກກອງປະຊຸມຫລວງເຊັ່ນ :

1. **ກັມມາທິການດ້ານເສດຖະກິດ** ນຶ່ງທ່ານ ເປັນຫົວຫນ້າກັມມາທິການ ທີ່ເປັນນາຍຄັງສູນກາງ ພປລ ມີຫນ້າທີ່ເກັບກຳ ບັນທຶກລາຍ ໄດ້ລາຍຈ່າຍ ທັງຫມົດຂອງພປລ,ວິ່ງເຕັ້ນຊອກວິທີເອົາເງີນການຊ່ວຍເຫລືອ ຈາກສາກົນ,ການຊ່ວຍເຫລືອ ຫລື ການບໍລິ ຈາກ ຂອງຊາວລາວທົ່ວໂລກ,ວິທີຫາລາຍໄດ້ຕາມເງື່ອນໄຂອັນເຫມາະສົມ. ນອກຈາກນັ້ນ ກັມມາທິການນີຍັງມີຄະນະກັມມາທິການທີ່ມີຫນ້າທີ່ຕິດຕາມ ແລະ ສຶກສາຄົ້ນຄວ້າຕີລາຄາ ສະພາບການ ເສຖະກິດໃນ ລາວອີກ.

2. **ກັມມາທິການເກັບກຳຫລັກຖານ ການຊ່ວຍເຫລືອຂອງສາກົນ ທີ່ມີຕໍ່ປະເທດລາວ** ຜ່ານມາ ຈົນເຖິງປະຈຸບັນ, ຕິດຕາມການຊ່ວຍເຫລືອຂອງຣັຖະບານແຕ່ລະປະເທດ, ຂອງອົງການທີ່ ບໍ່ຂຶ້ນ ກັບຣັຖະບານ,ການລົງທຶນ ໃນລາວແລະອື່ນໆ

3. **ກັມມາທິການເກັບກຳຫລັກຖານ ຕິດຕາມ ການສໍ້ຫລາດບັງຫລວງໃນລາວຜ່ານມາ ແລະປະຈຸບັນ.**

4. **ກັມມາທິການດ້ານຂ່າວສານ** ເປັນຜູ້ເກັບກັບ ຮີບໂຮມຂ່າວ ແລະ ຈັດທຳເວບຊາຍຂອງ ພປລ , ວາລະສານຂອງ ພປລ ແລະ ຂ່າວອື່ນໆທີ່ກ່ຽວຂ້ອງກັບ ພປລ ແລະ ຂະບວນການຕໍ່ສູ້ເພື່ອ ປະຊາທິ ປະໄຕ ໃນລາວ, ຈັດທຳເວບຊາຍ ຂອງ ພັນທະມິດເພື່ອປະຊາທິປະໄຕໃນລາວ ທີມີ ພາສາລາວ,ອັງ ກິດ,ເຢັງຣະ ມັນ,ຝັຣງ, ຈັດທຳວາລະສານ ພປລ ທີ່ເປັນພາສາລາວ ເພື່ອອອກຂ່າວ ແຈ້ງໃຫ້ມວນຊົນ ເຂົ້າໃຈເປົ້າຫມາຍ ຂອງ ພປລ, ເກັບກຳ ແລະ ອອກຂ່າວທີມີມຸມຄວາມຈິງທີ່ເກີດຂຶ້ນຢູ່ລາວ ແລະ ໃນໂລກທີ່ກ່ຽວຂ້ອງ ກັບລາວ ໃຫ້ຄົນລາວຢູ່ໃນປະເທດ ຫູແຈ້ງ ຕາໃສ, ອອກຂ່າວ ທີຫນ້ານັບຖື ແກ່ສາກົນ ແລະ ຊຸມຊົນລາວນອກປະເທດ.

5. **ກັມມາທິການດ້ານສິດທິມະນຸສ:** ຕິດຕາມການລະເມີດສິດທິມະນຸສໃນລາວໃຫ້ທັນການ,ພົວພັນຕິດຕາມການເຄື່ອນໄຫວຂອງທຸກການຈັດຕັ້ງຂອງລາວ ແລະ ສາກົນ ທີບໍ່ຂຶ້ນກັບຣັຖະບານ ແລະຂອງຣັຖະບານແຕ່ລະປະເທດ ທີ່ກ່ຽວຂ້ອງກັບດ້ານສິດທິມະນຸສໃນລາວ, ປະກອບເອກະສານດ້ານ ການລະເມີດສິດ ທິມະນຸສໃນລາວ ໃຫ້ຄະນະພປລ ທາງດ້ານການລະເມີດສິດທິມະນຸສໃນລາວ ເພື່ອຍື່ນໃຫ້ອົງການ ສາກົນ ກ່ຽວຂ້ອງຊາບ ເພື່ອຫນີບຮັດໃຫ້ທາງການ ສປປລ ແກ້ໄຂ.

6. **ກັມມາທິການກະກຽມໃນການເລືອກຕັ້ງເສລີໃນລາວ** ເປັນຜູ້ສຶກສາກະກຽມຮ່າງກົດຫມາຍການ ເລືອກຕັ້ງແບບເສຣີໃນລາວ,ກົດຫມາຍໄລຍະກະກຽມການເລືອກຕັ້ງ, ຮ່າງຣັຖທັມມະນູນ ແຫ່ງຊາດ ພາຍໃຕ້ລະບົບປົກຄອງແບບປະຊາທິປະໄຕ ແລະ ຮ່າງແບບແຜນການເຈລະຈາ.

7. **ກັມມາທິການສຳພັນຊົນຊາດຊົນເຜົ່າ** ເປັນຜູ້ຕິດຕໍ່ພົວພັນການຈັດຕັ້ງ ແລະ ຊຸມຊົນລາວ ເຜົ່າຕ່າງໆ ຢູ່ນອກປະເທດ ແລະ ໃນປະເທດ ເພື່ອຊຸກຍູ້ໃຫ້ມີຄວາມຮັກແພງສາມັກຄີທຸກຊົນຊາດຊົນເຜົ່າຂອງລາວ ເພື່ອຮັກສາວັດທະນາທັມຂອງເຜົ່າຈ່າທງ ໂດຍຖືວ່າເປັນຊາດລາວ ນຳກັນເພື່ອຊຸກຍູ້ໃຫ້ເປັນພະລັງຊ່ວຍ ໃຫ້ປະເທດລາວມີການປ່ຽນແປງໄປສູ່ລະບົບປົກຄອງແບບປະຊາທິປະໄຕ, ມີເອກະຣາຊອັນແທ້ຈິງ ແລະ ໃຫ້ໄດ້ຢູ່ຮ່ວມກັນ ໂດຍມີຄວາມສະເມີພາບໃນການເປັນພົນລະເມືອງລາວ ໃນການລ້ຽງຊີບ ແລະທັດສະນະຕໍ່ຫນ້າກົດຫມາຍ.

8.**ກັມມາທິການ ຕີລາຄາ ກວດກາການປະຕິບັດງານ** ການເຄື່ອນໄຫວຂອງ ຄະນະນຳພາ ແລະ ສະມາຊິກຂອງ ພປລ.ກັມມາທິການນີ້ແມ່ນບຸກຄົນຊົງຄຸນວຸທິຜູ້ສຳຄັນທີ່ເປັນສະມາຊິກໃນ ພປລ ທີ່ມີຄວາມ ສາມາດຕິດຕາມການເຄື່ອນໄຫວຂອງພປລ ຢ່າງໃກ້ສິດແລະ ມີທັດສະນະ ຄວາມສາມາດ ຕີລາຄາການ ເຄື່ອນໄຫວຂອງ ພປລ ແບບມີເຫດຜົນ ແລະ ທ່ຽງທັມ ແລ້ວແຈ້ງໃຫ້ຄະນະປະທານພປລຊາບທຸກໆຫົກເດືອນ ຊາບເພື່ອຊອກຫາວິທີແກ້ໄຂໃຫ້ທັນ ສະພາບການ.

9. **ກັມມາທິການຄົ້ນຄົ້ວເກັບກຳຂໍ້ມູນກ່ຽວກັບສັນຍາ ແລະ ສົນທິສັນຍານາໆຊາດກ່ຽວກັບລາວ** , ກັມມາທິການີ້ມີຫນ້າທີ່ເກັບກຳຂໍ້ມູນກ່ຽວກັບສັນຍາຕ່າງໆຂອງ ນາງຊາດກັບລາວ ,ຕີລາຄາຜົນໄດ້ຜົນເສັຽແກ່ລາວ ແລະຄົ້ນຄວ້າ ຊອກຫາວິທີການແກ້ໄຂ ບັນຫາສັນຍາຕ່າງໆ ທີມີຜົນເສັຽໃຫ້ແກ່ລາວ. ມີຫນ້າທີ່ເກັບກຳ ກົດຫມາຍກ່ຽວກັບ ການຄ້າພາຍໃນ ແລະ ນອກປະເທດ,ກົດຫມາຍກ່ຽວກັບ ການຫມູນໃຊ້ການ ຊ່ວຍເຫລືອຈາກສາກົນແລະອື່ນໆ.

10.**ກັມມາທິການພົວພັນສາກົນ** ເປັນບຸກຄົນທີ່ມີທັດສະນະເຫມາະສົມ ແລະ ມີຄວາມສາມາດ ໃນການຕິດຕໍ່ພົວພັນກັບສາກົນ, ມີຫນ້າທີ່ຕິດຕໍ່ພົວພັນກັບອົງການຕ່າງໆ ຂອງສາກົນ ຕາມແຜນ ການແລະ ການຕົກລົງຂອງຄະນະປະທານ ພປລ ເພື່ອຍາດແຍ່ງ ເອົາຄວາມ ເຫັນອົກເຫັນໃຈ ແລະ ການຊ່ວຍເຫືລອຂອງສາກົນໃຫ້ແກ່ ການເຄື່ອນໄຫວຂອງພປລ ກໍ່ຄື ເພື່ອຊຸກຍູ້ ໃຫ້ມີ ການປ່ຽນແປງ ໃນລາວ ໄປສູ່ປະຊາທິປະໄຕ.

11. **ກັມມາທິການ ຄົ້ນຄວ້າ ແລະ ວິໃຈການເມືອງ:** ເປັນບຸກຄົນທີ່ມີທັດສະນະທີ່ເຫັນກວ້າງມອງໄກ, ມີຄວາມສົນໃຈທາງການເມືອງ, ມີຄວາມສະດວກ ແລະ ແລະ ຄວາມສາມາດໃນການ ຕິດຕາມ, ເກັບກຳ

ແລະ ວິໃຈ ສະພາບການທາງດ້ານການເມືອງຂອງລາວ ຢູ່ໃນປະເທດ ແລະ ນອກປະເທດ ຕາມເຫດການທີ່ເກີດຂຶ້ນ ແລ້ວແຈ້ງໃຫ້ ຄະນະປະທານພປລ ຊາບ ຢ່າງທັນການ ຫລື ເປັນໄລຍະ ເພື່ອຄະນະປະທານຈະນຳໄປຄົ້ນຄວ້າ ແລະ ຕົກລົງວິທີການປະຕິບັດ ເປັນຂັ້ນຕາມຄວາມເຫມາະສົມ.

12.ກັມມາທິການ ດ້ານວັດທະນາທັມ ແລະ ປະວັດສາດ ຂອງລາວ: ເປັນບຸກຄົນຜູ້ຊີ້ງຄຸນວຸທີ ທີ່ຊຸກຍູ້ໃຫ້ມວນຊົນລາວ ຮັກສາຮີດຄອງປະເພນີ ແລະວັດທະນາທັມລາວອັນດີງາມ , ຊຸກຍູ້ໃຫ້ມີການປະຕິ ບັດຫລັກ ການທາງສາສານາພຸດອັນຖືກຕ້ອງເປັນທັມ, ເປັນຜູ້ຕິດຕາມເກັບກຳ ແຜນການ ຂອງພັກ ຮັຖ ສປປລ ທີ່ສົ່ງຄົນເຂົ້າມາທຳລາຍຄວາມສາມັກຄີຂອງຊຸມຊົນລາວນອກປະເທດໃນສະຖານທີ່ຊຸມ ນຸມໃນວັດວາ ຕ່າງໆ ຂອງລາວອົບພະຍົບ ເພື່ອແຈ້ງໃຫ້ຄະນະປະທານ ພປລ ຊາບ ເປັນໄລຍະຕາມ ເຫດການອັນ ເຫມາະສົມ ເພື່ອຫາຊ່ອງທາງສະກັດກັ້ນ, ເປັນຜູ້ເກັບກຳເອກະສານ ຕ່າງໆ ກຽ່ວກັບປະວັດສາດຂອງລາວ ເພື່ອເຜີຍແຜ່ໃຫ້ຄົນຮຸ້ນຫລັງຊາບ ແລະ ຮັກ ສາເປັນ ເອກະສານ ລວມຂອງຊາດໃນອະນາຄົດ.

## ງ. ວ່າດ້ວຍສະມາຊິກ ພປລ:

ສະມາຊິກພັກ ພປລ ທີສອງປະເພດຄື : ສະມາຊິກຖາວອນ ແລະ ສະມາຊິກສນັບສນູນ

**ມາດຕຣາ 1 ສະມາຊິກຖາວອນ :**

ກ. ສະມາຊິກຖາວອນ ໄດ້ແກ່ຊາວລາວທົ່ວໂລກ ຫຼືຊາວສາກົນ ທີມີອາຍຸແຕ່18ປີຂຶ້ນໄປ ໂດຍບໍ່ຈຳກັດ ເພດ, ໄວ,ບໍ່ຈຳແນກຊົນຊັ້ນວັນນະ ສາສະນາ ຫລື ເຜົ່າພັນ ຈະສັງກັດຢູ່ອົງການໃດໆ ກໍ່ຕາມ ທີເຫັນດີ ເຫັນ ຊອບນຳແນວທາງ ຂອງ ພປລ ຕາມ ທັມມະນູນ ສະບັບນີ້.

ຂ. ໄດ້ຍື່ນຄຳຮອ້ງເຂົ້າເປັນສະມາຊິກຂອງ ພປລ

ງ. ໄດ້ເສັງຄ່າບຳລຸງຕາມກຳນົດ

ຈ. ສະມາຊິກຖາວອນ ມີສິດລົງຄະແນນສຽງ ແລະ ອອກຄຳເຫັນໃນກອງປະຊຸມ ຫລວງ ຂອງ ພປລ , ສະມາຊິກ ຄົນນຶ່ງ ສຽງນຶ່ງ ແລະມີສິດສະມັກເປັນປະທານ ແລະ ໜ້າທີອື່ນໆໃນກັມມາທິການຂແໜງ ຕ່າງ ຕາມຄວາມສາມາດຂອງຄົນ. ແຕ່ລະການຈັດຕັ້ງຕ່າງໆທີ່ຕັ້ງມາ ກ່ອນມີສິດສົ່ງຜູ້ຕາງໜ້າ ຂອງ ຕົນເຂົ້າເປັນສະມາຊິກ ໂດຍບໍ່ກຳນົດຈຳນວນ,ແຕ່ລະທ່ານມີສິດລົງຄະແນນສຽງ ທ່ານນຶ່ງສຽງນຶ່ງ

**ມາດຕຣາ2 ສະມາຊິກສນັບສນູນ: :**

ສະມາຊິກສນັບສນູນ ໄດ້ແກ່ບຸກຄົນ ສາມັນຊົນທົ່ວໄປ, ໂດຍບໍ່ມີການຈຳກັດເພດ, ໄວ,ການເຊື່ອຖື ຖານະ ແລະ ເຊື້ອຊາດ, ນັບທັງອົງການຈັດຕັ້ງສາກົນທີມີຄວາມປາຖານາດີ,ສະນັບສະນຸນໂຄງການນະໂຍບາຍ ຂອງ ພປລ ໄດ້ຊ່ວຍເຫຼືອບໍລິຈາກທາງດ້ານວັດຖຸ ຫລື ນັດໃຈ ແກ່ ພປລ

ສະມາຊິກສນັບສນູນ ຈະຖືກເຊີນເຂົ້າຮ່ວມກອງປະຊຸມຫຼວງ ຫລື ກອງປະຊຸມ ຕ່າງໆຂອງ ພປລ ມີສິດອອກຄວາມຄິດຄວາມ ເຫັນແຕ່ບໍ່ມີສິດລົງຄະແນນສຽງ.

**ມາດຕຣາ3 ຄ່າບຳລຸງສະມາຊິກຖາວອນ :**

ຈຳນວນອັດ ຕາຄ່າບຳລຸງຈາກສະມາຊິກປະຈຳປີຈະແມ່ນກອງປະຊຸມຫຼວງສາມັນເປັນຜູ້ຕົກລົງ. ກອງປະຊຸມຫຼວງຊຸດທຳອິດໄດ້ຕົກລົງເອົາອັດຕາຄ່າບຳລຸງ 20 ຢູໂຣ ຫຼື 25ໂດລາສະຫະລັດຕໍ່ປີ, ຈ່າຍຊ້າ ສຸດທ້າຍປີ. ຄ່າບຳລຸງນີ້ຕ້ອງຈ່າຍ ເຂົ້າຄັງລວມ ພປລ ຜ່ານຄັງເຂົ້າຄັງ ສູນກາງ ພປລ ຫຼືນາຍຄັງ ປະຈຳ ທະວີບທີ່ຕົນສັງກັດຢູ່ ອີງຕາມການຕົກລົງຂອງຄະນະປະທານ.ເງິນດັ່ງກ່າວມີສິດໃຊ້ ສຳລັບການເຄື່ອນ ໄຫວຂອງການ ພປລ ເຊັ່ນຄ່າສົ່ງຈົດໝາຍ,ການປະຊຸມ ແລະອື່ນໆ.

**ມາດຕຣາ 4 ການໄລ່ອອກ :**

ຫຼັງຈາກສະມາຊິກຜູ້ກ່ຽວໄດ້ຮັບຟັງ ແລະ ຮັບຮູ້ຄວາມຜິດຂອງຕົນຕໍ່ໜ້າຂອງຄະນະປະທານ ພປລ, ຄະນະດັ່ງ ກ່າວຈະໄດ້ລົງມັດຕິ ຕັກເຕືອນຜູ້ກ່ຽວເຖິງສອງຄັ້ງ ຫາກບໍ່ປ່ຽນຈະຖືກ ຂັບໄລ່ຜູ້ກ່ຽວອອກ ຈາກການເປັນ ສະມາ ຊິກຊົ່ວຄາວຫຼືສິ້ນເຊີງ ເນື່ອງຈາກຜູ້ກ່ຽວ ບໍ່ເສັງຄ່າບຳລຸງກາຍນຶ່ງປີ ຫຼື ກະທຳຄວາມເສັຽຫາຍອັນ ໃຫຍ່ແກ່ ພປລ. ຖ້າສະມາຊິກ ຜູ້ກ່ຽວຫາກໄດ້ເສັງຄ່າບຳລຸງໄປແລ້ວ ກໍຈະບໍ່ມີສິດຮຽກ ຖາມເອົາ ເງິນຄືນໄດ້.

**ມາດຕາ 5 ການລາອອກ :**

ທຸກສະມາຊິກ ພປລ ມີສິດລາອອກຈາກ ພປລ ໂດຍຂຽນຄຳຮ້ອງ ເຖິງຄະນະປະທານທີ່ລົງລາຍ ເຊັນຄັກແນ່.

**ມາດຕຣາ 6 ກອງປະຊຸມຫຼວງສະໄມສາມັນເລື້ອກຕັ້ງ :**

ກອງປະຊຸມຫຼວງສະໄມສາມັນເລື້ອກຕັ້ງຈະໄດ້ຈັດຂຶ້ນທຸກສີ່ປີ,ສະຖານທີ່ຈະແມ່ນທາງຄະນະປະທານຈະຕົກລົງຕາມເງື່ອນໄຂອຳນວຍ ເພື່ອເລື້ອກຕັ້ງເອົາປະທານ,ຄະນະປະທານຄົບຊຸດຂອງ ພປລ, ຄະນະເລຂາ ແລະ ສະມາຊິກໃນ ກັມມາທິການຕ່າງໆ, _ເພື່ອສະລຸບການເຄື່ອນໄຫວຜ່ານມາທຸກດ້ານ, ຖອກຖອນບົດຮຽນ, ການວາງແຜນປະຕິບັດຂ້າງໜ້າ ແລະ ການພິຈາຣະນາຕົກລົງບັນຫາຕ່າງໆທີ່ເກີດຂຶ້ນ.

**ມາດຕຣາ 7 ການຮຽກປະຊຸມສະໄມວິສາມັນ :**

ກອງປະຊຸມສະໄມວິສາມັນ ຈະເປີດຂຶ້ນໄດ້ກໍແຕ່ເມື່ອມີການຮຽກຮ້ອງ ການອັນຮີບດ່ວນ ຈາກຄະນະປະທານ ຫຼື ນຶ່ງສ່ວນສາມຂອງສະມາຊິກ ສາມັນ.ຫຼັງຈາກສຶກສາຄວາມຕ້ອງການຂອງສະມາຊິກແລ້ວ ເລຂາ ທິການເອກຫຼືປະທານ ພປລ ຈະຕ້ອງສົ່ງກ້ານເຊີນໄປເຖິງທຸກໆສະມາຊິກ ໂດຍແຈ້ງເຫດ ຜົນ, ສະຖານທີ ແລະ ວັນເວລາຢ່າງລະອຽດ.

**ມາດຕຣາ 8 ຈົດຫມາຍເຊີນເຂົ້າປະຊຸມ :**

ຈົດຫມາຍ ເຊີນເຂົ້າປະຊຸມສາມັນຫຼືວິສາມັນຈະຕ້ອງສົ່ງເຖິງ ສະມາຊິກທຸກໆທ່ານ ໂດຍມີການ ແຈ້ງເຖິງວັນເວລາ,ສະຖານທີ ແລະ ວາລະການກອງປະຊຸມ,ຕ້ອງສົ່ງໄປທາງໄປສະນີ ຫຼືທາງອີເມາຍ ຕາມບັນຊີລາຍ ຊື່ທີ່ມີໄວ້ນຳ ພປລ ຢ່າງຫນ້ອຍສິບສີ່ວັນກ່ອນ ວັນປະຊຸມ (ຕາມວັນທີ່ຕີກາສະແຕມໄປສະນີ ຫຼື ວັນທີ່ສົ່ງໃນອີເມາຍ) ໂດຍຈະຕ້ອງແມ່ນປະທານ ແລະ ຄະນະປະທານ ພປບ ເປັນຜູ້ກຳນົດແລະລົງລາຍເຊັນ.

**ມາດຕຣາ 9 ປະທານກອງປະຊຸມຫລວງ:**

ປະທານກອງປະຊຸມຫລວງແມ່ນ :

ກ. ປະທານຊຶ່ງເລືອກມາຈາກກອງປະຊຸມຫຼວງ ມີສິດອອກສຽງໃນການປ່ອນບັດ ຄືກັນກັບສະມາຊິກຖາວອນທຸກໆທ່ານ.

ຂ. ປະທານກອງປະຊຸມຫຼວງ ເປັນຜູ້ຄອບຄຸມຄວາມສະງົບ ໃນກອງປະຊຸມ.

ຄ. ປະທານກອງປະຊຸມຫຼວງ ຕ້ອງມີຄຸນນະວຸດທິທ່ຽງທັມ ຮູ້ຈັກລະບຽບ,ກົດຫມາຍປະຊຸມດີ.

**ມາດຕຣາ 10 ຂໍ້ກົດຫມາຍໃນການເປີດກອງປະຊຸມ**

ກອງປະຊຸມຈະເປີດຂຶ້ນໄດ້ ໃນເມື່ອມີສະມາຊິກເຂົ້າຮ່ວມເຖິງ ຊາ ຫ້າເປີເຊັນຂອງຈຳນວນ ສະມາຊິກ ທັງໝົດ ໃນນັ້ນນັບທັງຜູ້ທີ່ຂຽນໜັງສືມອບສິດໂດຍອະທິບາຍ ເຫດຜົນ ແລະ ມີລາຍເຊັນຄັກແນ່. ມີສິດ ປ່ອນບັດທາງໄປສະນີຖ້າຈຳເປັນໄປປະຊຸມບໍ່ໄດ້. ດັ່ງນັ້ນຖ້າມີການເລືອກຕັ້ງເອົາປະທານ ແລະ ຄະນະປະທານ ສະມາຊິກທຸກໆທ່ານ ຈະຕ້ອງຮູ້ກ່ອນວັນເລື້ອກຕັ້ງວ່າແມ່ນທ່ານໃດ ຈະສມັກເປັນ ຄະນະປະທານ ພປລ ເຊິ່ງຈະຕ້ອງປະກາດຊີວະປະຫວັດຂອງຜູ້ກ່ຽວ ໄປຢ່າງກ້ວາງຂວາງ.

ສະມາຊິກແຕ່ລະຄົນມີສິດຂຽນໜັງສືມອບສິດ ໃຫ້ສະມາຊິກຜູ້ອື່ນທີ່ຕົນ ມີຄວາມເຊື່ອຫມັ້ນ, ໜັງສືມອບ ສິດ ທີ່ມີເຫດຜົນ ແລະ ລາຍເຊັນຖືວ່າເປັນສຽງຕົກລົງ ໃນກອງປະຊຸມໄດ້.

**ມາດຕຣາ11 ຜູ້ບັນທຶກກອງປະຊຸມ:**

ແມ່ນຜູ້ທີ່ກອງປະຊຸມເຫັນພ້ອມ,ບົດບັນທຶກກອງປະຊຸມຕ້ອງມີທັງລາຍເຊັນຂອງຜູ້ບັນທຶກ ແລະ ລາຍເຊັນຂອງປະທານກອງປະຊຸມສຳລັບກອງປະຊຸມທ້ອງຖິ່ນ ແລະ ມີລາຍເຊັນຂອງປະທານ ພປລ ໃນກອງປະຊຸມໃຫຍ່ຂອງ ພປລ.

**ມາດຕຣາ 12.ການເລື່ອນກອງປະຊຸມ :**

ໃນກໍລະນີທີ່ສະມາຊິກ ເຂົ້າຮ່ວມກອງປະຊຸມທີ່ຖືກຮຽກຮ້ອງ ບໍ່ເຖິງຊາວຫ້າເປີເຊັນຂອງຈຳນວນ ສະມາຊິກທັງໝົດຈະຕ້ອງເລື່ອນ ກອງປະຊຸມໄປຄັ້ງໃໝ່ພາຍໃນເວລາອັນສົມຄວນ. ຖ້າມີເຫດການດ່ວນ ຕ້ອງແຈ້ງສາເຫດຢ່າງແຈ່ມແຈ້ງໃນການຮຽກປະຊຸມດ່ວນ ຄັ້ງນີ້ ແລະ ບໍ່ຈຳເປັນມີກຳນົດຈຳນວນ ຂອງສະມາ ຊິກເຂົ້າຮວມກອງປະຊຸມກໍໄດ້.

**ມາດຕຣາ 13 ການລົງຄະແນນສຽງ :**

ປະທານກອງປະຊຸມຕ້ອງແຕ່ງຕັ້ງ ຜູ້ກຳກັບຢາຍບັດ ແລະ ເກັບສຽງຢ່າງນ້ອຍສາມທ່ານ ສຸດແລ້ວແຕ່ສະຖານະການ. ທ່ານທີ່ຢາຍບັດ ແລະ ເກັບສຽງນັ້ນ ຕ້ອງແມ່ນສະມາຊິກເຂົ້າຮ່ວມກອງ ປະຊຸມທີ່ມີສິດ ລົງ

ສຽງຄືກັນ.

**ມາດຕຣາ 15 ກຳມະການກວດກາການເງິນ :**

ທຸກກອງປະຊຸມຫຼວງສະໄມສາມັນ ຈະຕ້ອງມີການເລືອກເອົາຄະນະກັມມາທິການ ກວດກາການເງິນ ຢ່າງນ້ອຍສາມທ່ານຢ່າງຫຼາຍຫ້າທ່ານ.

**ມາດຕຣາ 16 ສັນຍາໜັງສືດ້ານການເງິນ :**

ໜັງສືດ້ານການເງິນເຊັກທະນາຄານ ຫຼື ໜັງສືເງິນອື່ນໆຈະຕ້ອງລົງລາຍເຊັນນາຍຄັງ ທີ່ເປັນ ປະທານກັມມາທິການຝ່າຍເສດຖະກິດໄດ້ມອບໝາຍ ຈາກກອງປະຊຸມຫຼວງ. ນາຍຄັງດັ່ງກ່າວມີສິດ ເຊັນໜັງສື ດ້ານການເງິນ ໃນການຖອກ ຫຼືຖອນເງິນຜູ້ດຽວໄດ້ໃນຈຳນວນ ບໍ່ໃຫ້ກາຍຫ້າຮ້ອຍ ຢູໂຣຫຼືໂດລາ ສະຫະຣັຖ ເທົ່ານັ້ນ. ຖ້າມີຈຳນວນຫຼວງຫຼາຍເກີນນັ້ນ ຈະຕ້ອງມີປະທານ ຫຼື ຮອງປະທານ ພປລ ນຶ່ງທ່ານ ເຊັນຮັບຜິດ ຊອບແລະຮູ້ນຳ.

**ມາດຕຣາ 17 ການດັດແປງແລະແກ້ໄຂທັມມະນູນ :**

ການລົບລ້າງຫຼືດັດແປງທັມມະນູນ ຂໍ້ໃດຂໍ້ນຶ່ງຫຼືມາດຕາໃດມາດຕຣາໃດນຶ່ງ ຈະຕ້ອງໄດ້ຮັບມາຕິເຫັນດີຈາກກອງປະຊຸມຫຼວງແລະເອົາສຽງສ່ວນຫຼາຍເປັນຫຼັກ.

**ມາດຕາ 18 ການຍຸບເລີກອົງການ ພປລ :**

ກ. ຖ້າມອງເຫັນວ່າສະຖານະການໃນລາວຫາກເຂົ້າຮູບຮອຍ,ມີປະຊາທິປະໄຕ,ມີການເລືອກຕັ້ງເສຣີ,ມີເອກກະຣາດ ;ເອກກະພາບຢ່າງສົມບູນແລ້ວ ການຈັດຕັ້ງພັນທະມິຕເພື່ອປະຊາທິປະໄຕໃນລາວ ກໍຈະຍຸບເລີກໄດ້ ແຕ່ການຍຸບເລີກນີ້ແມ່ນກອງປະຊຸມຫຼວງຈະຕົກລົງ ແລະໄດ້ຮັບສຽງຢ່າງນ້ອຍສອງ ສ່ວນສາມ ຂອງສະມາຊິກໃນກອງປະຊຸມຫຼວງ.

ຂ. ໃນກໍລະນີທີ່ຖືກຍຸບ ພປລ ສັບສົມບັດຂອງ ພປລ ຕະລອດທັງເງິນໃນທະນາຄານ ຫຼັງຈາກໃຊ້ໜີ້ສິນທຸກຢ່າງ ແລ້ວຈະໄດ້ມອບແບ່ງໃຫ້ອົງການໃໝ່ ທີ່ມີນະໂຍບາຍເພື່ອສ່ວນລວມທີ່ຈະໄປພັດທະນາໃນລາວ ຫຼື ອົງການສາສະນາ ເພື່ອເປັນການຄ້ຳຊູພຸດທະສາສະນາຕໍ່ໄປ ຢູ່ນອກປະເທດ ຫຼື ຢູ່ໃນລາວ.

ທັມມະນູນສະບັບນີ້ໄດ້ຜ່ານການກວດກາຈາກຄະນະປະທານ ພປລ ຄົບຄະນະ, ໄດ້ ແປເປັນພາສາ ອັງກິດ ແລະ ເປັນເຍັຽຣະມັນຜ່ານທະນາຍຄວາມໂນຕາ, ກະຊວງການເງິນ ແລະ ສານທາງການຂອງປະເທດເຍັຽຣະມັນ.

ທີ່ຊີດເນ, ວັນທີ 17 ກັນຍາ 2011

ປະທານກອງປະຊຸມ
ສີມ ວິຈິດວົງສາ

ປະທານ ພັນທະມິຕເພື່ອປະຊາທິປະໄຕໃນລາວ
ດຣ. ບຸທອນ ຈັນທະລາວົງ -ວີເຊີ


**Office in Germany:** **Dr. Bounthone Chanthalavong- Wiese,** President, Hohenlimburger Str. 120, 58093 Hagen, Tel.&Fax: +49-2334-44 44 668, Email: chanthalavong@aol.com

**Canada:** **Dr.Khamlay Mounivongs,** Vice –President & Chief- Secretary, 1301 Gaetan Boucher, Saint-Hubert (Quebeck). Tel:.+1-450-4434795. E-mail: khamlay.mounivongs@hotmail.com

**Australia:** **Mr. Kat Ditthavong,** Vice-President, 16 Candlewood Street, Bossley Park, NSW 2176 . Tel.:+61-2-96 10 81 73, Email.: kdseri40@gmail.com

**USA:** **Mr.Bounleung Ngonevolalath,** Vice-President,11804 8th Ave S, Seattle,WA 98168 , Tel.:+1-206-767 1956

**France:** **Mr. Oun Saypharath,**Vice-President, 5 Passage Catinat, Residence de Gros du Chateau, 95210 St. Gratien, Tel.: +33-139641538,E-mail: ounsaypharath@aol.com